ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----===000===----

ກະຊວງໄອທາທິການ ແລະຂົນສົ່ງ

ເລກທີ: 01059 /ຍທຂ

ນະຄອນຫລວງວຽງຈັນ, ວັນທີ: 21/10/2013

# ຄຳສັ່ງ

## ຂອງລັດຖະມົນຕີວ່າການ

## ວ່າດ້ວຍການປະຢັດ ແລະຕ້ານການຟູມເຟືອຍ

## ສຳລັບການນຳໃຊ້ງົບປະມານບໍລິຫານລັດ ຂອງຂະແໜງ ຍທຂ

ເຖິງ: - ທ່ານຫົວໜ້າກົມ, ກອງ, ອົງການ, ສະຖາບັນ, ສູນຝຶກ ຍທຂ ແລະສະພາວິທະຍາສາດ-ເຕັກໂນໂລຊີ.

- ທ່ານຫົວໜ້າພະແນກ ຍທຂ ບັນດາແຂວງ ແລະນະຄອນຫລວງວຽງຈັນ.

- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ, ສະບັບເລກທີ 25/ນຍ, ລົງວັນທີ 4/11/2008.
- ອີງຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີ, ສະບັບເລກທີ 78/ນຍ, ລົງວັນທີ 2/9/2010.
- ອີງຕາມບົດສັງລວມລາຍງານຂອງຫ້ອງວ່າການລັດຖະບານ, ສະບັບເລກທີ 13/ຫລບ, ລົງວັນທີ 10/1/2013.
- ອີງຕາມກອງປະຊຸມຄະນະນຳກະຊວງເພື່ອແກ້ໄຂວຽກງານວິຊາສະເພາະ ຄັ້ງວັນທີ 18/3/2013.

ໃນໄລຍະຜ່ານມາຂະແໜງ ຍທຂ ໄດ້ຈັດຕັ້ງຜັນຂະຫຍາຍດຳລັດ, ຄຳສັ່ງ, ຄຳສັ່ງແນະນຳ ກໍ່ຄືແຜນງານຂອງລັດຖະບານກ່ຽວກັບການເພີ່ມຄວາມສັກສິດໃນການຈັດຕັ້ງປະຕິບັດນະໂຍບາຍປະຢັດຢ່າງຕັ້ງໜ້າ. ແຕ່ເຖິງຢ່າງໃດກໍ່ຕາມ ໃນການຈັດຕັ້ງປະຕິບັດຕົວຈິງ ເຫັນວ່າການປະຕິບັດນະໂຍບາຍປະຢັດໃນຂະແໜງ ຍທຂ ຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ ແລະຍັງມີບັນຫາຄົງຄ້າງທີ່ຕ້ອງເອົາໃຈໃສ່ແກ້ໄຂ. ດັ່ງນັ້ນ, ເພື່ອໃຫ້ຄຳສັ່ງ ແລະຂໍ້ຕົກລົງຂອງນາຍົກລັດຖະມົນຕີ ໄດ້ຖືກຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ ບົນຈິດໃຈບຸກທະລຸກວ່າເກົ່າ,

## ລັດຖະມົນຕີວ່າການ ອອກຄຳສັ່ງ:

1. ໃຫ້ເພີ່ມທະວີການຊີ້ນຳນຳພາ, ການໂຄສະນາເຜີຍແຜ່ ແລະຜັນຂະຫຍາຍນະໂຍບາຍ, ດຳລັດ, ຄຳສັ່ງ, ຄຳສັ່ງແນະນຳ ກໍ່ຄືແຜນງານຂອງລັດຖະບານກ່ຽວກັບການປະຢັດ ແລະຕ້ານການຟູມເຟືອຍ ໃຫ້ພະນັກງານ-ລັດຖະກອນໃນກົມ/ກອງຂອງຕົນໃຫ້ທົ່ວເຖິງ, ເລິກເຊິ່ງ ແລະເປັນຮູບປະທຳກວ່າເກົ່າ.
2. ໃຫ້ເພີ່ມທະວີສະຕິຄວາມເປັນເຈົ້າ ແລະຄວາມເປັນແບບຢ່າງຂອງພະນັກງານ-ລັດຖະກອນ ໃນການຄຸ້ມຄອງ ແລະນຳໃຊ້ຊັບສິນຂອງລັດ ໂດຍສະເພາະແມ່ນໃນການປະຢັດ ແລະຕ້ານການຟູມເຟືອຍ, ພ້ອມກັນນັ້ນ ໃຫ້ຖືເອົາການປະຢັດເປັນມາດຕະການໜຶ່ງທີ່ສຳຄັນ ໃນການຕີລາຄາຜົນງານ ແລະຄຸນສົມບັດທັດສະນະຂອງພະນັກງານທຸກຂັ້ນຂອງຕົນ ໂດຍໃຫ້ມີການຕິດຕາມ, ກວດກາ ແລະປະເມີນຜົນເປັນປະຈຳ.

3. ໃຫ້ສ້າງເປັນລະບຽບການ ແລະແຜນການຂອງກົມ-ກອງຕົນກ່ຽວກັບການປະຢັດ ໂດຍໃຫ້ລົງເລິກໃນລາຍລະອຽດຕ່າງໆ ເຊັ່ນ:

- ສຳລັບໂຄງການກໍ່ສ້າງຕ່າງໆທີ່ສຳເລັດແລ້ວ ແມ່ນບໍ່ໃຫ້ນຳໃຊ້ງົບປະມານລັດ ໃນການຈັດພິທີມອບ-ຮັບ ແລະເປີດການນຳໃຊ້ (ນອກຈາກໃນກໍລະນີທີ່ຜູ້ໃຫ້ທຶນສະເໜີ ໂດຍນຳໃຊ້ເງິນຊ່ວຍເຫລືອລ້າຂອງຜູ້ໃຫ້ທຶນເອງ ແລະໃນກໍລະນີບໍລິສັດຜູ້ຮັບເໝົາສະເໜີຈັດ ໂດຍນຳໃຊ້ງົບປະມານຂອງບໍລິສັດເອງ).
- ໃນການຕ້ອນຮັບຄະນະຜູ້ແທນຂັ້ນຕ່າງໆຂອງກະຊວງ ແລະພະແນກ ຍທຂ ແຂວງ/ນະຄອນຫລວງ ແມ່ນບໍ່ໃຫ້ນຳໃຊ້ເງິນຈາກບັນດາບໍລິສັດ ແລະລັດວິສາຫະກິດ ໃນການຊຳລະຄ່າຫ້ອງນອນ, ຄ່າຈັດພິທີຕ້ອນຮັບ, ງານລ້ຽງ, ການແຂ່ງຂັນກິລາ ແລະກິດຈະກຳຕ່າງໆ.
- ການນຳໃຊ້ລະບົບໂທລະສັບແບບລວມສູນ ໂດຍເວລາຈະໂທເຂົ້າ-ອອກ ຕ້ອງໂທຜ່ານພະນັກງານຕໍ່ສາຍ (Operator).
- ການນຳໃຊ້ເຄື່ອງອັດເອກະສານ (Photo copy) ຢູ່ແຕ່ລະກົມ/ກອງ ແມ່ນໃຫ້ນຳໃຊ້ແບບເຊົ່າ ແລະແບບລວມສູນ 1-2 ເຄື່ອງ/ກົມ, ພະແນກ ຍທຂ ແຂວງ/ນະຄອນຫລວງ, ໂດຍຖອດຖອນບົດຮຽນນຳຫ້ອງການທີ່ໄດ້ເຮັດທົດລອງແລ້ວ.
- ການນຳໃຊ້ເຄື່ອງພິມ (Printer) ໃຫ້ຄົ້ນຄວ້າ ແລະທົດລອງນຳໃຊ້ແບບລວມສູນ ໂດຍໃຫ້ມີເຄື່ອງພິມ 1 ເຄື່ອງ/ພະແນກຂອງກົມ, ຂະແໜງຂອງພະແນກ ຍທຂ ແຂວງ/ນະຄອນຫລວງ ແລະໃຫ້ຈັດພິມ 2 ໜ້າເພື່ອປະຢັດເຈ້ຍ.
- ການຈັດກອງປະຊຸມຕ່າງໆຂອງຂະແໜງ ຍທຂ ແມ່ນໃຫ້ຈັດຢູ່ພາຍໃນກະຊວງ ແລະພາຍໃນພະແນກ ຍທຂ ແຂວງ/ນະຄອນຫລວງ, ໃນກໍລະນີຈຳເປັນແທ້ ຈຶ່ງໄປຈັດຢູ່ໂຮງແຮມ ຫລືສະຖານທີ່ອື່ນໆ. ສຳລັບຢູ່ກະຊວງ ຍທຂ ແມ່ນບໍ່ໃຫ້ມີການຈັດພາເຂົ້າທ່ຽງແກ່ຜູ້ເຂົ້າຮ່ວມກອງປະຊຸມ.
- ໃຫ້ມອດໄຟ, ແອເຢັນ, ຄອມພິວເຕີ, ໝໍ້ຕົ້ມນ້ຳຮ້ອນ, ພັດລົມດູດອາກາດ ແລະເຄື່ອງໃຊ້ໄຟຟ້າອື່ນໆ ໃນເວລາພັກທ່ຽງ ແລະເວລາເລີກການ.
- ການຄຸ້ມຄອງນຳໃຊ້ພາຫະນະຂອງລັດ ແມ່ນໃຫ້ປະຕິບັດຕາມຂໍ້ຕົກລົງຂອງລັດຖະມົນຕີວ່າການ, ສະບັບເລກທີ 12302/ຍທຂ, ລົງວັນທີ 7/9/2009.

4. ມອບໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ.

5. ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີວ່າການ**

ກະຊວງໂຍທາທິການ ແລະ ຂົນສົ່ງ

ລັດຖະມົນຕີ

**ສົມມາດ ພົລເສນາ**

**<u>ສຳເນົາປ່າສົ່ງ:</u>**

| | |
|---|---|
| - ຫ້ອງວ່າການລັດຖະບານ | 01 ສະບັບ ເພື່ອລາຍງານ |
| - ບັນດາກົມ ບ່ອນລະ | 01 ສະບັບ ເພື່ອຈັດຕັ້ງປະຕິບັດ |
| - ພະແນກ ຍທຂ ບັນດາແຂວງ/ນະຄອນຫລວງ ບ່ອນລະ | 01 ສະບັບ ເພື່ອຈັດຕັ້ງປະຕິບັດ |
| - ສຳເນົາເກັບມ້ຽນ | 02 ສະບັບ |